# ປະຫວັດ

ຂອງ

# ບ້ານເພິດ

ບ້ານເພິດ

ເມືອງເລົ່າງານ

ແຂວງ ສາລະວັນ

# ປະຫວັດ ຂອງ ບ້ານເພີງ

ບ້ານນີ້ມາຕັ້ງທໍາອິດແມ່ນເຂົາເອີ້ນຊື່ ບ້ານໜອງຕີນໃຫຍ່, ມີ 3 ຄອບຄົວໃຫຍ່ມາຈາກບ້ານພະນອນໃຫຍ່ ລົງມາຕັ້ງທັບຢູ່ແຕ່ລະບ່ອນ. ມີ 2 ຄອບຄົວຕັ້ງຢູ່ບ້ານໜອງຕີນໃນປະຈຸບັນນີ້ ຄື ຄອບຄົວພໍ່ໂຄດ ແລະ ຄອບຄົວພໍ່ດຽນ.

ສ່ວນອີກ 1 ຄອບຄົວນັ້ນ ໄປຕັ້ງຢູ່ບ້ານໂຕກໂລກຄືຄອບຄົວພໍ່ບາ, ການຕັ້ງຢູ່ 2 ຈຸດນີ້ ແມ່ນທໍາການຜະລິດບໍ່ໄດ້ຮັບຜົນ. ພໍ່ດີພາກສ່ວນຢູ່ບ້ານໜອງຕີນພາກັນລົງມາຊອກຫາເຂດບ່ອນການໄຮ່, ຕັ້ງ ບ້ານຢູ່ມີຈໍານວນ 15 ຄອບຄົວລ້ວນແຕ່ແມ່ນລູກຫລານຂອງພໍ່ໂຄດ ແລະ ລູກຫລານຂອງພໍ່ດຽນ. ຈໍານວນນີ້ມາຕັ້ງບ້ານກ່ອນປະມານ 7 ປີ ຈຶ່ງມີຄອບຄົວຂອງພໍ່ບາ ແລະ ຄອບຄົວຈາຍະສານມາ, ໃນຈໍານວນ 3 ຄອບຄົວໃຫຍ່ນີ້ ລ້ວນແຕ່ແມ່ນຄົນພໍ່ແມ່ດຽວກັນ ແມ່ນວ່າອ້າຍນ້ອງຄືງ.

ດັ່ງນັ້ນຈຶ່ງເອີ້ນວ່າບ້ານໜອງຕີນໃຫຍ່, ຢູ່ອີກປະມານ 15 - 16 ປີ ມີຄົນຈາກແຕ່ງຫົນອື່ນທະຍອຍກັນມາເພີ້ມກັນຈົນເຖິງ 150 ຫຼັງຄາເຮືອນ ກໍ່ເລີຍຕັ້ງເອົາທ່ານ ພົມມະສານເປັນນາຍ ບ້ານ.

ບ້ານໜອງຕີນໃຫຍ່ນາຕັ້ງປີ 1900 ກ່ອນຈະໄດ້ລົງມາຫາບ່ອນຕັ້ງບ້ານເຮືອນທາງນີ້ກໍ່ຍ້ອນອຶດເຂົ້າກິນ. ຍ້ອນໝູປ່າ ແລະ ນົກກິນຈຶ່ງບໍ່ໄດ້ເຂົ້າ ມີການອຶດຢາກກໍ່ເລີຍຢູ່ບໍ່ໄດ້. ກໍ່ພາກັນແຕກ

ລົງມາຢູ່ບ້ານໜອງຕົນໃຫຍ່, ເຂດນີ້ແມ່ນເຂດອຸ່ມເຂົ້າອຸ່ມປາເຮັດ ນ້ອຍໄດ້ຫຼາຍ.

ບ້ານໜອງຕົນໃຫຍ່ຕັ້ງຢູ່ປະມານ 45 ປີ ກໍ່ເລີຍມີການຈັບ ຕາຍໃນປີ 1945 (ມີຄົນຕາຍ) ມື້ໜຶ່ງມີ 3-4 ຄົນຕາຍ ທັງໝົດຕາຍ ປະມານ 30 ກວ່າຄົນເຂົາເອີ້ນວ່າເປັນພະຍຸ, ດັ່ງນັ້ນກໍ່ເລີຍພາກັນ ແຕກບ້ານອີກຢູ່ຕາມໄຮ່ສວນ ແລະ ມີຈຳນວນໜຶ່ງໄປບ້ານສອງ ຫ້ອງ ແລະ ຫຼາຍຄອບຄົວແຕກກັນໄປ.

ຢູ່ປະມານ 2 ປີ ກໍ່ເລີຍຕິດຕາມຫາກັນມາຢູ່ຄືນກໍ່ເລີຍຕັ້ງ ບ້ານຢູ່ບ່ອນໃໝ່.

ກໍ່ເລີຍເອົາທ່ານ ຕົງ ເປັນນາຍບ້ານ, ພໍດີທາງເຈົ້າເມືອງ ເລົ່າງາມໃນລະບອບເກົ່າເອີ້ນປະຊຸມພໍ່ບ້ານ, ກໍ່ເລີຍຖາມນາຍ ບ້ານວ່າ ບ້ານພວກເຈົ້າພາກັນມາໝົດແລ້ວບໍ່, ພໍ່ນາຍບ້ານກໍ່ເລີຍ ຕອບວ່າມາຈຳນວນໜຶ່ງປະມານ 50 ກວ່າຄອບຄົວ, ປະຈຸບັນພວກ ເຮົາໄດ້ຕັ້ງບ້ານໃໝ່, ທາງເຈົ້າເມືອງກໍ່ຖາມວ່າເຈົ້າຈະເອີ້ນແນວ ໃດ. ຊື່ບ້ານ ພໍ່ບ້ານຕອບວ່າຈະເອີ້ນຊື່ບ້ານເພົາ ແຕ່ນັ້ນມາຈຶ່ງ ເອີ້ນວ່າ ບ້ານເພົາ.

ນັບແຕ່ຕັ້ງບ້ານເພົາຍັງມີ 2 ເທື່ອແຕກ. <u>ແຕກຊຸດທີ່ 1</u> ແມ່ນທະຫານລອບກວດໄປຢູ່ເລົ່າງາມ ແຕ່ປະຊາຊົນຊາວບ້ານ ເພົາບໍ່ຢາກຢູ່ບ້ານເລົ່າງາມ, ກໍ່ເລີຍສະເໜີຂຶ້ນໄປຢູ່ບ້ານໜອງຕົນ,

ບ້ານພໍ່ເຂັມໃນເວລາໄປຢູ່ທາງພຸ້ນ, ທາງເຈົ້າເມືອງລະບອບເກົ່າຢູ່ເມືອງເລົ່າງາມກໍ່ສັ່ງທະຫານໄປຈູດເຮືອນຈົນໝົດ. ປະມານ 7 - 8 ເດືອນກໍ່ພາກັນກັບຄືນແຕ່ໝອງຕົມ ແລະ ພໍ່ເຂັມມາຢູ່ຄືນບ້ານເກົ່າແຕ່ເຮືອນຊານແມ່ນບໍ່ມີເຂົາຈູດໝົດ.. ພາກັນມາປຸກຕູບຢູ່ ພໍ່ໄດ້ທຳການຜະລິດທັງຕາເຂົ້າກິນ, ເຂົ້າເຂົາຈູດໝົດ.

ມີຈຳນວນໜຶ່ງໜີໄປຢູ່ປ່າເພື່ອເຈັບປືນຕໍ່ສູ້, ຈຳນວນໜີບໍ່ທັນກໍ່ແລ້ວໄປ.

<u>ແດກຊຸດທີ່ 2 ແມ່ນ</u> CM 802 ກອດເຂົ້າຢູ່ບ້ານພັດທະນາຄືບ້ານປ່າຈີນ, ຢູ່ປະມານໜຶ່ງປີກໍ່ຕົກລົງກັນອອກຢູ່ປ່າໝົດບ້ານ, ອອກຢູ່ປ່າແຕ່ປີ 1967 ຈົນເຖິງ 1973 ຈຶ່ງໄດ້ເຂົ້າມາຢູ່ບ້ານເກີດຄືນ, ຖືບແຕ່ບ້ານພັດທະນາໄປຢູ່ເຂດບ້ານ ສອງຫ້ອງນ້ອຍ ປະມານ 1 ປີ ກໍ່ກັບຄືນມາຢູ່ເຂດບ້ານໂຕເອງ. ມາຕັ້ງເຮັດເປັນ 3 ຈຸດ, ຈຸດ 1 ຊື່ວ່າບ້ານກາງ, ຈຸດ 2 ຊື່ວ່າບ້ານລຸ່ມ ແລະ ຈຸດ 3 ຊື່ວ່າບ້ານກົກງີ້ວ.

ກ່ອນຈະໄດ້ແບ່ງນັ້ນກໍ່ບໍ່ມີຄວາມສາມາດຢູ່ລວມກັນໄດ້ຍ້ອນຍ້ານຍົນ. ຮັກສາລູກຫຼານບໍ່ໄດ້ ດັ່ງນັ້ນຈຶ່ງໄດ້ແບ່ງເຮັດ 3 ຈຸດ.

ບ້ານເພິ່ງໄດ້ຢູ່ສະບຸກສຸກສຳບາຍ, ໄດ້ສ້າງສາທຳການຜະລິດເປັນປົກກະຕິແມ່ນແຕ່ປີ 1973 ຈົນປະຈຸບັນນີ້.

ຄຳປີງ (ເປັນຜູ້ແຕ່ງ)

# ປະຫວັດການແຕ່ງງານ ຂອງ
# ເຜົ່າລະເວນ

ການແຕ່ງງານກັນແຕ່ສະໄໝກ່ອນເຜົ່າລະເວນແມ່ນບໍ່ໄດ້ແຕ່ງ ເມື່ອນັກຮັກກັນແມ່ນໄປຢູ່ນຳກັນໂລດໂດຍແມ່ນເຖົ້າແກ່ແລະການຈັດຕັ້ງບໍ່ຮັບຮູ້ນຳ ຄົນນັກກັນກໍ່ໄປຢູ່ນຳກັນໂລດ.

ແຕ່ກ່ອນຜູ້ບ່າວບໍ່ໄດ້ໄປລົມສາວ, ໂດຍແມ່ນຜູ້ສາວໄປລົມອ້າຍ ບ່າວ. ຜູ້ສາວເອົາຄົກນາໜ່ຳແລ້ວເອົາຄຸ່ຍມາເປົ່າ, ສິຊໍ ແລະ ຕີລະນາດ ພໍດີມີເສືອມາຄົບ, ດັ່ງນັ້ນຜູ້ຍິງກໍ່ເລີຍບໍ່ກ້າໄປລົມບ່າວອີກ, ແຕ່ນັ້ນມາຜູ້ບ່າວຈຶ່ງໄດ້ໄປລົມສາວຈົນເຖິງສະໄໝປະຈຸບັນນີ້.

ກ່ອນຈະໄດ້ແຕ່ງງານກັນນັ້ນກໍ່ຍ້ອນໄພ້ ແລະ ເຂີຍຂີ້ກີ. ຜູ້ເປັນເຂີຍໄປຫາຍິງໄດ້ຟານມາ, ພໍ່ເຖົ້າການພວກເຈົ້າໄດ້ຫຍັງໂອ້ຍບໍ່ໄດ້ຫຍັງດອກ ໄປບໍ່ເຫັນຫຍັງແຕ່ທາງ ພໍ່ເຖົ້າກັບແມ່ເຖົ້າເຫັນລູກເຂີຍໄດ້ຟານ ການວ່າບໍ່ໄດ້, ຕໍ່ມາລູກໄພ້ໄປຊ້ອນປາໄດ້ມາເຕັມຄ້ອງແມ່ຍ່າ ນາການໄດ້ບໍ່ປາຂໍແມ່ນາ ລູກໄພ້ຕອບ ບໍ່ມີອີຫຍັງ.

ພໍດີຍ່ານັ່ງຢູ່ເທິງເຕີນ ປາຕົກຈາກຂ້ອງໂຕ 1 ທາງໄພ້ວ່າໄດ້ໂຕດຽວນີ້ແລ້ວ ເອົາໃຫ້ຍ່າເນື່ອກິນ, ຢູ່ອີກປາພັດລົ້ນຕົກອີກສອງໂຕລູກໄພ້ວ່າໄດ້ 2 ໂຕນີ້ແລ້ວເອົາໃຫ້ຍ່າ, ຊາ້ຍ່າກໍ່ຍັງບໍ່ທັນເນື່ອປາ

24 / VII

ພັດຕົກອີກໂຕທີ່ 3 ໄພ້ອ່າງໄດ້ 3 ໂຕນີ້ແລ້ວຈັບໃຫ້ຍ່າອີກ, ແຕ່ທາງຍ່າກໍ່ບໍ່ທັນເມື່ອ ພໍດີບັງເອີນຢູ່ໃນຂ້ອງຕົກລົງພໍດີປາພັດອອກຈາກຂ້ອງ ທາງໄພ້ເລີຍບໍ່ຈັກຈະເວົ້ານຳຍ່າອີກກໍ່ເລີຍໄດ້ແບ່ງໃຫ້ຍ່າປາຈຳນວນນັ້ນ.

ດັ່ງນັ້ນ ແຕ່ນັ້ນມາຈຶ່ງມີການແຕ່ງງານກັນຍ້ອນເຫັນລູກໄພ້ກັບລູກເຂີຍຂີ້ກໍ່, ແຕ່ນັ້ນມາພໍ່ແມ່ຈຶ່ງມີຫົວຄິດປັນຍາຈຶ່ງໄດ້ແຕ່ງງານກັນເພື່ອໃຫ້ເກີ້ງແກ່ການຈັດຕັ້ງຕັກເຕືອນໃນເມື່ອໄດ້ຂອງກິນໃຫ້ເຢາະແກງແບ່ງແຈ່ວໃຫ້ພໍ່ແມ່ ແລະ ປູ່ຍ່າ.

ການແຕ່ງງານໃນສະໄໝກ່ອນແມ່ນຜູ້ຍິງເປັນຜູ້ຕິດຢອດນຳຫ້ອຍຜູ້ຊາຍ. ແຕ່ງຄົນໄຊ້ໄມ້ປັກໄປການວ່າງໄດ້ມີຄວາມມັກຮັກກັນບໍ່ຄັນວ່າມີແມ່ນຕົກລົງມື້ຕົກລົງວັນກັນ. ມື້ຈະແຕ່ງ ເວລາແຕ່ງນັ້ນມີເຫຼົ້າ 3 ໄຫ ໄກ່ 3 ໂຕ. ນີ້ແມ່ນເຂົ້າໃນຮອງຮີດແທ້, ນອກນັ້ນຍັງມີຫຼາຍຢູ່ແຕ່ທາງກິນດືດອກ. ໃນປະຈຸບັນແມ່ນຂໍແບບລາວ.

ບໍ່ມີສິນແກ້ວຄ່າດອງ, ມີແຕ່ວ່າເຮັດຮີດທຳນະດາເຫຼົ້າ 3 ໄຫ ໄກ່ 3 ໂຕ ແລະ ກໍ່ມີຂໍ້ຜູກມັດຂອງການຈັດຕັ້ງ. ກ້າພ້ອມກັນຢ່າກປະແມ່ນເຄື່ອງສິນສ້າງແບ່ງກັນສະເໝີ. ກ້າຜູ້ຊາຍຢ່າກປະເມຍ ຝ່າຍດຽວແມ່ນໄດ້ເສັຍໃຫ້ເມຍ 30.000 ກີບ. ກ້າເມຍຢ່າກປະພົວຝ່າຍດຽວກໍ່ຄືກັນ. ເວລາເມຍເຈັບໄຂ້ ແລະຊາບໂຊ

ພໍ່ນັ້ນຢາກປະເນຍ, ແມ່ນພໍ່ກີກເສັຍໃຫ້ເນຍ 60.000 ກີບ. ກົ້ງ ພໍ່ເຈັບໄຂ້ເນຍຢາກປະກໍ່ເໝືອນກັນ.

ກົ້ງນັກຮັກກັນຢູ່ນຳກັນບໍ່ໄດ້ແຕ່ງ. ເວລາກີພາຄາຫ້ອງແມ່ນ ໄດ້ເອັດສະຫຼາກດິນດອນ ແມ່ນເຖົ້າໝູແມ່ນເສຍນຳກັນລະຫວ່າງ ຍິງກັບຊາຍເຂົາວ່າ ( ນາບທາງ ).

ຄຳປີງ (ເປັນຜູ້ແຕ່ງ)

# ປະຫວັດໃນການເຮັດຮີດກິນຄວາຍ

ແຕ່ສະໃໝກ່ອນຄົນກຳພອຍຢູ່ສອງອ້າຍນ້ອງນຳກັນຜູ້ເປັນອ້າຍໄປຮຽນວິຊາບຳນິດງ່ານວິຊານີ້ແມ່ນວິຊາເຫັນຜີ ດັ່ງນັ້ນສອງອ້າຍນ້ອງຕົກຢູ່ນຳເຮືອນດຽວກັນ, ພໍດີໃນມື້ຜູ້ເປັນອ້າຍ ບອກໃຫ້ນ້ອງລິງຜ່າຟືນຢູ່ກ້ອງຫຼາເຮືອນ, ຜູ້ນ້ອງກໍ່ຈັບຂວານລິງຕາມອ້າຍບອກນັ້ນ. ພໍດີຜ່າລົງ 2 - 3 ບາດ ພໍດີຂວານນັ້ນກຶກຕີນນ້ອງ, ນ້ອງເອີ້ນບອກອ້າຍວ່າອ້າຍຂວານກຶກຕີນແລ້ວກຶກແນວໃດ. ເບິ່ງແມ້ອ້າຍເລືອດອອກບໍ່ເຊົາຈະເຮັດແນວໃດ ຜູ້ເປັນອ້າຍມີມົນເຫັນຜີ, ລາວເຫັນຜີນັ້ນຊຸກຂວານໃຫ້ກຶກຕີນ, ລາວເລີຍບອກໃຫ້ບະ, ນ້ອງຖາມບະໃຫ້ກິນຫຍັງ ອ້າຍວ່າບະໃຫ້ກິນເຫຼົ້າໄຫໄກ່ໂຕ, ນ້ອງກໍ່ບະປະຕິບັດຕາມອ້າຍເວົ້າແຕ່ເລືອດຍັງອອກ. ນ້ອງບອກບະແລ້ວແຕ່ເລືອດ ຍັງອອກຢູ່, ອ້າຍໃຫ້ບະ, ໃຫ້ກິນໝູອີກນ້ອງກໍ່ບະອີກ, ແຕ່ເລືອດຍັງອອກຢູ່, ນ້ອງບອກອ້າຍວ່າຍັງອອກບໍ່ເຊົາຢູ່ຈະເຮັດແນວໃດ ອ້າຍບອກອີກວ່າບະໃຫ້ກິນຄວາຍອີກເບິ່ງ, ນ້ອງກໍ່ເລີຍບະໃຫ້ກິນຄວາຍພໍດີເລືອດເຊົາບໍ່ອອກ. ພໍດີໃຫ້ແຕ່ງໃຫ້ກິນຄວາຍ. ດັ່ງນັ້ນເຜົ່າລະເວນພວກເຮົາຈຶ່ງໄດ້ເຮັດຮີດກິນຄວາຍຈົນເຖິງປະຈຸບັນນີ້.

ຮີດກິນຄວາຍມີຄວາຍ 1 ໂຕ, ເຫຼົ້າ 7 ໄຫ. ແຕ່ກ່ອນແມ່ນກິນແທ້ ຄວາຍ 1 ໂຕ, ເຫຼົ້າ 7 ໄຫ, ຕໍ່ມາອີກບະຄວາຍເອົາໝູຕາງຄວາຍ ເອົາໝູ 7 ໂຕ ເຫຼົ້າ 7 ໄຫ ແຕ່ຮີດຍັງຄືເກົ່າ ໃນປະຈຸບັນ

ແມ່ນເອົາໝູຕາງຄວາຍ ເອົາໝູ 1 ໂຕຄືແຕ່ຄາວກິນຄວາຍແທ້ນັ້ນ ເຖິງ 7 ໄຫ.

- ໄຫ ທີ່ 1 ຄອບພີເຈົ້າບ້ານ, ຄືພິນະເຫສັກນັ້ນ
- ໄຫທີ່ 2 ແມ່ນໄຫ ແກ້ໂຕບະ
- ໄຫທີ່ 3 ແມ່ນຮັບໝູ່ຜູ້ດີເບິ່ງ, ເຍືອງຜູ້ໄຊ້ນັ້ນ
- ໄຫທີ່ 4 ແມ່ນຮັບພີ່ນ້ອງຜູ້ທີ່ມາຮ່ວມຮີດທີ່ໄດ້ໄປເຊີນນັ້ນ
- ໄຫທີ່ 5 ແມ່ນໄຫແກ້ຮີດເທື່ອທີ່ 2 ພາກັນໄປບອກພີ່ນ້ອງທົ່ວບ້ານ, ເຫຼາະໄປແຕ່ລະເຮືອນ, ຜູ້ເຈົ້າຮີດເອົາແພມັດ, ບ່ຽງບ້າຍຊ້າຍເບື້ອງຂວາຄອບງ້າວ, ມັດຢູ່ໃນງ້າວມີສິ້ນ 1 ພືນ, ແພ 1 ວາ, ໝາກກະດິງ2 ໜ່ວຍແຂນ. ຜູ້ຍິງເອົາແພສີ້ນພາດບ່າ, ຜູ້ຢູ່ໃນຕູບຕີປັງຫາດເພາະແຕ່ກ່ອນແມ່ນບ້ານໃຫຍ່ຮ້ານລີງທາງເມື່ອ, ເວລາເຫຼາະໄປນັ້ນມີໝໍລໍາ, ໝໍແຄນ, ທັງລໍາທັງຟ້ອນເກົ້າແກ່ບາວສາວ.
- ໄຫທີ່ 6 ແມ່ນຮັບໝູ່ເຍືອງຜູ້ທີ່ເຊີນພີມາຮັບມາກິນເຄື່ອງຕົກແຕ່ງນັ້ນມີ ລາບສີ້ນ ແລະອື່ນໆ.
- ໄຫທີ່ 7 ແມ່ນໄຫສຸດທ້າຍ, ຜ່າຫົວຄວາຍເອົາສະໝອງໃຫ້ເກົ້າແກ່ກິນ, ກິນແລ້ວແມ່ນເຂົ້າສາບໃຫ້ພີ່ນ້ອງບາຍແລ້ວເລີກລາກັນເມື່ອ, ເຈົ້າຮີດເນຽນມັດເຄື່ອງຂອງ.

ຄໍາປີງ (ເປັນຜູ້ແຕ່ງ)

ໂຄງການ *ການສຶກສາຊຸມຊົນ* ຢູ່ແຂວງສາລະວັນ